ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 06 ຫາ 10 ມັງກອນ 2025




ແຕ່ງຕັ້ງພະນັກງານ ນຳພາ-ຄຸ້ມຄອງ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສະຫວັນນະເຂດ

ພິທີປະກາດຍົກຍ້າຍ ແລະແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງພະແນກກະສິກຳ ແລະປ່າໄມ້ແຂວງສະຫວັນນະເຂດ ໄດ້ຈັດຂຶ້ນຢ່າງເປັນທາງໃນວັນທີ 30 ທັນວາ 2024 ທີ່ສະໂມສອນຫ້ອງວ່າການແຂວງ ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານຂອງທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງສະຫວັນນະເຂດ ແລະທ່ານ ປອ ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ ເລຂາຄະນະພັກ ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້, ໂດຍມີຄະນະນຳຈາກຫ້ອງການ,ກົມ, ສະຖາບັນ,ສູນອ້ອມຂ້າງຈາກກະຊວງກະສິກຳ-ປ່າໄມ້, ພະແນກການ, ກົມກອງອ້ອມຂ້າງແຂວງ, ການຈັດຕັ້ງກ່ຽວຂ້ອງ ຕະຫຼອດເຖິງຄະນະພັກ-ຄະນະພະແນກ ແລະພະນັກງານ-ລັດຖະກອນຂອງພະແນກກະສິກຳ-ປ່າໄມ້ແຂວງສະຫວັນນະເຂດເຂົ້າຮ່ວມຢ່າງພ້ອມພຽງ.

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນພິທີ, ທ່ານ ສຸບິນ ຫຼວງດ້ວງ ຮັກສາການຫົວໜ້າພະແນກກະສິກຳ ແລະປ່າໄມ້ແຂວງ ໄດ້ຂຶ້ນຜ່ານບົດສະຫຼຸບມອບ-ຮັບວຽກງານຂອງຂອງພະແນກກະສິກຳ-ປ່າໄມ້ແຂວງ. ຈາກນັ້ນ, ຕາງໜ້າຄະນະຈັດຕັ້ງແຂວງ ໄດ້ຂຶ້ນຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການຍົກຍ້າຍ ແລະແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງຈຳນວນ 5 ສະບັບຄື:

- ຂໍ້ຕົກລົງເລກທີ 5093/ຈຂ, ລົງວັນທີ 5/12/2024 ວ່າດ້ວຍການຍົກຍ້າຍທ່ານ ສຸບິນ ຫຼວງດ້ວງ ຮັກສາການຫົວໜ້າພະແນກກະສິກຳ ແລະປ່າໄມ້ແຂວງ ໄປປະຈຳການຢູ່ຫ້ອງວ່າການເມືອງ

ຊົນນະບູລີ

- ຂໍ້ຕົກລົງເລກທີ 5535/ຈຂ, ລົງວັນທີ 27/12/2024 ວ່າດ້ວຍການແຕ່ງຕັ້ງທ່ານ ປອ ສຸມັນທາ ຈຸນລະມະນີ ເປັນຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ(ຄົນໃໝ່),

- ຂໍ້ຕົກລົງເລກທີ 5536/ຈຂ, ລົງວັນທີ 27/12/2024 ວ່າດ້ວຍການແຕ່ງຕັ້ງທ່ານ ນາງ ອໍລະວັນ ສາມາດມະນີວົງ ແລະທ່ານ ແກ້ວອຸດອນ ສຸລິຍະ ເປັນຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ,

- ຂໍ້ຕົກລົງເລກທີ 5537/ຈຂ, ລົງວັນທີ 27/12/2024 ວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງບໍລິຫານຂອງພະແນກກະສິກຳ ແລະ ປ່າໄມ້ແຂວງຈຳນວນ 9 ທ່ານດັ່ງນີ້: ທ່ານ ມະລິລຳມອນ ຖັນທະເທບ ເປັນຫົວໜ້າຂະແໜງປູກຝັງ, ທ່ານ ໂພສີທັດ ຈັນທະລາສີ ເປັນຫົວໜ້າຂະແໜງປ່າໄມ້, ທ່ານ ບົວພັນ ບຸນວິໄລ ເປັນຫົວໜ້າຂະແໜງພັດທະນາຊົນນະບົດ, ທ່ານ ຄານທະວົງ ສຸວັນນະລັງສີ ເປັນຫົວໜ້າຂະແໜງລ້ຽງສັດ ແລະການປະມົງ, ທ່ານ ຄຳສຸກ ແກ້ວວິໄລພອນ ເປັນວ່າການຫົວໜ້າກອງກວດກາປ່າໄມ້, ທ່ານ ສຸລິວັນ ສີລິວົງໄຊ ເປັນວ່າການຫົວໜ້າຂະແໜງບໍລິຫານ ແລະແຜນການ, ທ່ານ ປອ ລຳສັກ ແກ້ວມໍລະກົດ ເປັນວ່າການຫົວໜ້າກອງຄຸ້ມຄອງປ່າສະຫງວນ ແລະປ່າປ້ອງກັນ, ທ່ານ ເພັດສະໝອນ ສີມະລີ ເປັນວ່າການຫົວໜ້າຂະແໜງຄຸ້ມຄອງ ແລະພັດທະນາທີ່ດິນກະສິກຳ, ທ່ານ ປອ ສູນທອນ ເທບປັນຍາ ເປັນວ່າການຫົວໜ້າສູນພັດທະນາກະສິກຳ ແລະປ່າໄມ້ໜອງເຕົ່າ,

- ຂໍ້ຕົກລົງເລກທີ 5534/ຈຂ, ລົງວັນທີ 27/12/2024 ວ່າດ້ວຍການຍົກຍ້າຍພະນັກງານດຳລົງຕຳແໜ່ງບໍລິຫານປະເພດ 5 ຂອງພະແນກກະສິກຳ-ປ່າໄມ້ແຂວງ 2 ທ່ານຄື: ທ່ານ ນາງ ເພັດມະນີ ຈັນໄຊຍະວົງ ຫົວໜ້າຂະແໜງປ່າໄມ້ ແລະທ່ານ ສຸລິພອນ ພົມມະຈັກ ຫົວໜ້າສູນພັດທະນາ ແລະ ສົ່ງເສີມເຕັກນິກກະສິກຳໜອງເຕົ່າ ໄປປະຈຳການຢູ່ຂະແໜງບໍລິຫານ ແລະແຜນການ.

ພ້ອມນີ້, ກໍ່ຍັງໄດ້ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງເລກທີ 3302/ຄປພຂ, ລົງວັນທີ 27/12/2024 ວ່າດ້ວຍການບົ່ງຕົວແຕ່ງຕັ້ງສະຫາຍ ປອ ສຸມັນທາ ຈຸນລະມະນີ ເປັນເລຂາຄະນະພັກຮາກຖານພະແນກສະກຳ ແລະປ່າໄມ້ແຂວງ.

ໂອກາດນີ້, ທ່ານ ບຸນໂຈມ ອຸບົນປະເສີດ ກໍ່ໄດ້ໃຫ້ກຽດມອບຂໍ້ຕົກລົງໃຫ້ພະນັກງານນຳພາ-ຄຸ້ມຂອງພະແນກກະສິກຳ ແລະປ່າໄມ້ແຂວງ ທີ່ໄດ້ຮັບການແຕ່ງຕັ້ງ ແລະຍົກຍ້າຍໃນຄັ້ງນີ້ຢ່າງສົມກຽດ. ວາລະຕໍ່ມາ, ໃນພິທີ ກໍ່ໄດ້ມີການລົງນາມໃນບົດບັນທຶກມອບ-ຮັບວຽກງານຢ່າງເປັນທາງການລະຫວ່າງທ່ານ ສຸບິນ ຫຼວງດ້ວງ ຮັກສາການຫົວໜ້າພະແນກກະສິກຳ-ປ່າໄມ້ ແລະທ່ານ ປອ ສຸມັນທາ ຈຸນລະມະນີ ຫົວໜ້າພະແນກກະສິກຳ-ປ່າໄມ້ຄົນໃໝ່.

ໃນຕອນທ້າຍຂອງພິທີຄະນະປະທານ ຍັງໄດ້ໃຫ້ກຽດກ່າວມີຄຳເຫັນໂອ້ລົມ ແລະໃຫ້ທິດຊີ້ນຳໃນຫຼາຍບັນຫາສຳຄັນຕໍ່ຄະນະພັກ-ຄະນະນຳ ແລະພະນັກງານຫຼັກແຫຼ່ງຂອງພະແນກກະສິກຳ-ປ່າໄມ້ແຂວງ ທີ່ຈະຕ້ອງໄດ້ພ້ອມກັນສຸມໃສ່ຈັດຕັ້ງປະຕິບັດໃຫ້ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;